**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

1067

**ກະຊວງສາທາລະນະສຸກ** **ເລກທີ:......../ສທ**

**ນະຄອນຫຼວງວຽງຈັນ, ວັນທີ ............**

23 MAY 2016

# ຂໍ້ຕົກລົງ

## ກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຄວບຄຸມຢາສູບ

- ອີງຕາມ ກົດໝາຍ ວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 07/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມ ພັນທະຂອງ ສປປ ລາວ ຕໍ່ສົນທິສັນຍາສາກົນ ວ່າດ້ວຍການຄວບຄຸມຢາສູບ ມາດຕາ 8, 9, 10, 11 ແລະ 13.
- ອີງຕາມ ການສະເໜີຂອງກົມອະນາໄມ-ສົ່ງເສີມສຸຂະພາບ ສະບັບເລກທີ 0085/ກອສ, ລົງວັນທີ 15/1/2016

ລັດຖະມົນຕີ ກະຊວງສາທາລະນະສຸກ ຕົກລົງ:

## ໝວດທີ I

## ຫຼັກການທົ່ວໄປ

### ມາດຕາ 1 ຈຸດປະສົງ

ເພື່ອຜັນຂະຫຍາຍເນື້ອໃນຂອງມາດຕາ 33, 34, 37, 38 ແລະ 48 ຂອງກົດໝາຍວ່າດ້ວຍ ການຄວບຄຸມຢາສູບ ສະບັບເລກທີ 07/ສພຊ, ລົງວັນທີ 26 ພະຈິກ 2009 ເຮັດໃຫ້ ການຈັດສະຖານທີ່ປອດຄວັນຢາສູບ, ການພິມຄຳເຕືອນສຸຂະພາບໃສ່ວັດຖຸຫຸ້ມຫໍ່ ຜະລິດຕະພັນຢາສູບ ແລະ ການຫ້າມໂຄສະນາ ຜະລິດຕະພັນຢາສູບ ໃຫ້ມີຜົນສັກສິດ ແລະ ເປັນເອກະພາບ ໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

### ມາດຕາ 2 ການອະທິບາຍ ຄຳສັບ

ນອກຈາກຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍວ່າດ້ວຍ ການຄວບຄຸມຢາສູບ ສະບັບເລກທີ 07/ສພຊ, ລົງວັນທີ 26 ພະຈິກ 2009 ແລ້ວ, ຍັງມີບາງຄຳສັບ ທີ່ຕ້ອງອະທິບາຍເພີ່ມເຕີມອີກ ດັ່ງນີ້:

1. **ການຊົມໃຊ້ຜະລິດຕະພັນຢາສູບ** ໝາຍເຖິງ ກິນ, ເປົ່າ, ພົ່ນ ເຂົ້າໃນປາກ ຫຼື ດັງ ຫຼື ດ້ວຍວິທີອື່ນໆ;
2. **ຜະລິດຕະພັນຢາສູບອີເລັກໂຕຣນິກ** (E-cigarette ຫຼື Electronic cigarettes) ໝາຍເຖິງ ຢາສູບ ໄຟຟ້າ ທີ່ບັນຈຸສານລະເຫີຍນິໂກຕິນ ແລະ ສູບດົມໄດ້ໂດຍໃຊ້ພະລັງງານໄຟຟ້າ. ຜະລິດຕະພັນຢາສູບໄຟຟ້ານີ້ ມີຫຼາຍຊະນິດທີ່ແຕກຕ່າງກັນ, ບາງຊະນິດຄ້າຍຄື ກອກຢາສູບ ແລະ ມີບາງຊະນິດຄ້າຍຄືກັບ ບິກຂຽນ ຫຼື ເປັນຫຼອດນ້ອຍໆ;
3. **ຜະລິດຕະພັນຢາສູບຊີຊາ** (Shisha) ແມ່ນອຸປະກອນສູບຢາຊະນິດໜຶ່ງ ທີ່ໃຊ້ລະບົບພະລັງງານໄຟຟ້າ ເພື່ອສູບດົມເອົາສານລະເຫີຍນິໂກຕິນທີ່ປະສົມໃນນ້ຳ ຜ່ານທໍ່ເຂົ້າປາກ. ນອກຈາກນິໂກຕິນແລ້ວ ນ້ຳດັ່ງ

ກ່າວຍັງປະສົມສານແຕ່ງກິ່ນເຊັ່ນ: ກິ່ນໝາກໄມ້ຕ່າງໆ ເຮັດໃຫ້ເຂົ້າໃຈຜິດວ່າ ເປັນຜະລິດຕະພັນຢາພື້ນເມືອງ ແລະ ປອດໄພຕໍ່ສຸຂະພາບ;

4. **ພາຍໃນອາຄານ** ໝາຍເຖິງ ສະຖານທີ່ໃດໜຶ່ງ ທີ່ມຸງດ້ວຍຫຼັງຄາ ຫຼື ແອ້ມດ້ວຍຝາ ຫຼື ບໍ່ມີຝາ ແລະ ຝານັ້ນຈະຖາວອນ ຫຼື ຊົ່ວຄາວ ກໍຕາມ;

5. **ສານພິດ ແລະ ສານທີ່ພາໃຫ້ເປັນມະເຮັງ ໃນຄວັນຢາສູບ**

**ກ) ສານພິດ**

1) ຄາບອນ ມໍນອກໄຊ (Carbon Monoxide) ແມ່ນສານດຽວກັນກັບຄວັນຈາກທໍ່ລົດ, ທີ່ຂັດຂວາງການລໍາລຽງອົກຊີແຊນໄປລັ້ງງຮ່າງກາຍ ພາໃຫ້ເປັນພະຍາດຫົວໃຈ-ເສັ້ນເລືອດ ແລະ ນໍາໄປສູ່ການເສຍຊີວິດ;

2) ໄຮໂດຣເຈນ ໄຊຍາໄນ (Hydrogen cyanide) ແມ່ນແກັສພິດ ທີ່ທໍາລາຍຫຼອດປອດ ແລະ ຖົງປອດ ພາໃຫ້ໄອມີຂີ້ກະເທີ ແລະ ເປັນສາເຫດຂອງ ອັກເສບຫຼອດປອດຊໍາເຮື້ອ ແລະ ນໍາໄປສູ່ການເສຍຊີວິດ;

3) ນີໂກຕີນ (Nicotine) ແມ່ນສານເສບຕິດ ທີ່ພົບແຕ່ໃນໃບຢາສູບເທົ່ານັ້ນ, ເຮັດໃຫ້ເສັ້ນເລືອດແດງຕີບຕັນ ພາໃຫ້ເປັນພະຍາດຫົວໃຈເສັ້ນເລືອດ ນໍາໄປສູ່ການເສຍຊີວິດ ແລະ ຍັງໃຊ້ຜະລິດເປັນຢາຂ້າແມງໄມ້;

4) ແອມໂມເນຍ (Ammonia) ແມ່ນສານຊະນິດດຽວກັນກັບນໍ້າຢາລ້າງຫ້ອງນໍ້າ ເຮັດໃຫ້ແສບຕາ-ດັງ, ເປັນສາເຫດ ຂອງ ຫຼອດປອດອັກເສບ ແລະ ນໍາໄປສູ່ການເສຍຊີວິດ;

5) ໄນໂຕຣເຈນ ໄດອອກໄຊ (Nitrogen Dioxide) ແມ່ນແກັສທີ່ທໍາລາຍ ເຫຍື່ອເມືອກຫຼອດປອດ ແລະ ຖົງປອດ ເຮັດໃຫ້ເປັນ ພະຍາດຖົງປອດອັດຕັນຊໍາເຮື້ອ ແລະ ນໍາໄປສູ່ການເສຍຊີວິດ;

6) ອາກເຊນິກ (Arsenic): ໃຊ້ເປັນສ່ວນປະກອບໃນການຜະລິດຢາເບື່ອໜູ ເມື່ອເຂົ້າຮ່າງກາຍໂດຍການກິນ ຫຼື ຫາຍໃຈ ຈະທໍາລາຍລະບົບທາງເດີນອາຫານ ແລະ ສ່ວນອື່ນໆຂອງຮ່າງກາຍ ແລະ ເສຍຊີວິດໃນທີ່ສຸດ.

**ຂ) ສານພາໃຫ້ເປັນມະເຮັງ**

1) ທາຣ (Tar) ແມ່ນສານຊະນິດດຽວກັນກັບຢາງປູທາງ, ເມື່ອສະສົມໃນປອດ ຈະເປັນສາເຫດຫຼັກຂອງການເປັນມະເຮັງປອດ ແລະ ອັກເສບຫຼອດປອດຊໍາເຮື້ອ ແລະ ນໍາໄປສູ່ການເສຍຊີວິດ;

2) ຟໍໂມນ ຫຼື ຟໍມາລິນ (Formol, Formaline) ແມ່ນສານກັນເນົ່າ ທີ່ໃຊ້ດອງສົບຄົນຕາຍ ຊຶ່ງເປັນສາເຫດຂອງການເປັນມະເຮັງ ແລະ ນໍາໄປສູ່ການເສຍຊີວິດ;

3) ໄນໂຕຣຊາມີນ (Nitrosamine) ແມ່ນສານກັນບູດ ພາໃຫ້ເປັນມະເຮັງຕັບ, ໄຂ່ຫຼັງ, ຫຼອດອາຫານ ແລະ ກະເພາະອາຫານ ແລະ ນໍາໄປສູ່ການເສຍຊີວິດ.

## ໝວດທີ II

## ການຕິດເຄື່ອງໝາຍໃນສະຖານທີ່ ຫ້າມສູບຢາ ແລະ ການອະນຸຍາດໃຫ້ສູບຢາ

**ມາດຕາ 3 ການຕິດເຄື່ອງໝາຍຫ້າມສູບຢາ**

1) ສະຖານທີ່ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຄວບຄຸມຢາສູບ ມາດຕາ 37 ແລະ 38 ກ່ຽວກັບ ສະຖານທີ່ຫ້າມສູບຢາ ຕ້ອງຕິດປ້າຍ ຫຼື ເຄື່ອງໝາຍ ຫ້າມສູບຢາ;
2) ເຄື່ອງໝາຍຫ້າມສູບຢາ ຕ້ອງຕິດໄວ້ຢູ່ບ່ອນເປີດເຜີຍ, ເຫັນໄດ້ງ່າຍ, ຊັດເຈນ ໂດຍສະເພາະທາງເຂົ້າ ສະຖານທີ່ນັ້ນໆ;
3) ການຫ້າມສູບຢາ ແມ່ນຫ້າມສູບຢາທຸກປະເພດ ລວມທັງ ຢາສູບອີເລັກໂຕຣນິກ ຫຼື ຢາສູບໄຟຟ້າ (E-cigarette ຫຼື Electronic cigarettes) ແລະ ຢາສູບຊີຊາ (Shisha).

**ມາດຕາ 4 ສະຖານທີ່ອະນຸຍາດໃຫ້ສູບຢາ**

1) ສະຖານທີ່ອະນຸຍາດໃຫ້ສູບຢາ ຕ້ອງຢູ່ນອກອາຄານເທົ່ານັ້ນ ແລະ ຫ່າງຈາກຕົວອາຄານ ໂດຍສະເພາະ ປະຕູທາງເຂົ້າ ແລະ ປ່ອງຢ້ຽມ ຢ່າງໜ້ອຍ ສິບແມັດ, ສ່ວນພາຍໃນອາຄານທັງໝົດແມ່ນຫ້າມສູບຢາ;
2) ເຄື່ອງໝາຍອະນຸຍາດໃຫ້ສູບຢາ ຕ້ອງຕິດໄວ້ຢູ່ບ່ອນ ເປີດເຜີຍ, ເຫັນໄດ້ງ່າຍ ແລະ ຊັດເຈນ.

## ໝວດທີ III

## ການພິມຄຳເຕືອນສຸຂະພາບ ແລະ ສະຫຼາກ ໃສ່ຜະລິດຕະພັນຢາສູບ

**ມາດຕາ 5 ການພິມຄຳເຕືອນສຸຂະພາບ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ**

ຜະລິດຕະພັນຢາສູບທີ່ຜະລິດຢູ່ພາຍໃນປະເທດ, ນຳເຂົ້າມາຈາກຕ່າງປະເທດເພື່ອຈຳໜ່າຍໃນ ສປປ ລາວ ລວມທັງ ໃນຮ້ານຄ້າປອດພາສີ ຕ້ອງໄດ້ພິມຄຳເຕືອນສຸຂະພາບໃຫ້ຖືກຕ້ອງຕາມຫຼັກການ ດັ່ງນີ້:

1. ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ກະຊວງສາທາລະນະສຸກ ເປັນຜູ້ກຳນົດ ຄຳເຕືອນສຸຂະພາບທີ່ເປັນ ຮູບພາບ ແລະ ຂໍ້ຄວາມຕົວໜັງສື ເປັນພາສາລາວ ເພື່ອສະໜອງໃຫ້ແກ່ຜູ້ດຳເນີນທຸລະກິດ ຜະລິດ ແລະ ນຳເຂົ້າ ຜະລິດຕະພັນຢາສູບ ໃນການຈັດພິມຕາມຕົ້ນສະບັບ ແລະ ຕ້ອງມີການກຳນົດຄຳເຕືອນສຸຂະພາບ ໃໝ່ ໃນທຸກໆສອງປີ ຫຼື ແຕ່ລະໄລຍະ ໂດຍອີງຕາມຜົນການຄົ້ນຄວ້າທາງດ້ານວິຊາການ ທັງພາຍໃນ ແລະ ສາກົນ;
2. ຄຳເຕືອນສຸຂະພາບ ແລະ ຂໍ້ຄວາມ ປະກອບດ້ວຍ ຫົກ ແບບ ດັ່ງນີ້:

| | | |
|---|---|---|
| ແບບທີ 1 | ຮູບ ແລະ ຂໍ້ຄວາມຄຳເຕືອນ | ຄວັນຢາສູບ ພາໃຫ້ເປັນມະເຮັງປອດ; |
| ແບບທີ 2 | ຮູບ ແລະ ຂໍ້ຄວາມຄຳເຕືອນ | ຄວັນຢາສູບ ພາໃຫ້ເປັນມະເຮັງປາກ; |
| ແບບທີ 3 | ຮູບ ແລະ ຂໍ້ຄວາມຄຳເຕືອນ | ຄວັນຢາສູບ ພາໃຫ້ເສັ້ນເລືອດສະໝອງແຕກ; |
| ແບບທີ 4 | ຮູບ ແລະ ຂໍ້ຄວາມຄຳເຕືອນ | ຄວັນຢາສູບ ພາໃຫ້ຫົວໃຈວາຍ; |
| ແບບທີ 5 | ຮູບ ແລະ ຂໍ້ຄວາມຄຳເຕືອນ | ສູບຢາ ພາໃຫ້ແຂ້ວດຳ-ປາກເໝັນ; |
| ແບບທີ 6 | ຮູບ ແລະ ຂໍ້ຄວາມຄຳເຕືອນ | ຄວັນຢາສູບ ຂ້າຄົນອ້ອມຂ້າງ. |

- ລາຍລະອຽດ ໃຫ້ເບິ່ງເອກະສານຊ້ອນທ້າຍ ທີ 1.

3. ວັດຖຸຫຸ້ມຫໍ່ ຫຼື ຊອງຢາສູບ

1) ໃນກໍລະນີ ຊອງຢາສູບ ດ້ານທີ່ມີເນື້ອທີ່ລະຫວ່າງ 41,35 ຫາ 50,4 ຊັງຕີຕາແມັດ ເປັນດ້ານທີ່ມີເນື້ອທີ່ຫຼາຍທີ່ສຸດ, ໃຫ້ພິມຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ທີ່ມີຂະໜາດ 5,50 x 6,53 ຊັງຕີແມັດ ໃສ່ຂອບເທິງສຸດ ໂດຍໃຫ້ກວມເອົາຢ່າງໜ້ອຍດ້ານລະ ເຈັດສິບຫ້າ ເປີເຊັນ ຂອງເນື້ອທີ່ດັ່ງກ່າວ;

2) ໃນກໍລະນີ ຊອງຢາສູບ ດ້ານທີ່ມີເນື້ອທີ່ຫຼາຍທີ່ສຸດນັ້ນ ມີເນື້ອທີ່ນ້ອຍກວ່າ ຫຼື ຫຼາຍກວ່າ 41,35 ຫາ 50,4 ຊັງຕີຕາແມັດ, ຮູບພາບ ແລະ ຂໍ້ຄວາມຄໍາເຕືອນທີ່ພິມນັ້ນ ສາມາດ ຫຍໍ້ ຫຼື ຂະຫຍາຍຂະໜາດໄດ້ຕາມ ຄວາມເໝາະສົມ ແຕ່ຕ້ອງຮັກສາສັດສ່ວນຂອງຄວາມກວ້າງ ແລະ ຄວາມສູງ ລວມທັງຄວາມຊັດເຈນ ຂອງຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ໄວ້ຄືເກົ່າ ແລະ ໃຫ້ເນື້ອທີ່ຂອງຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ກວມເອົາຢ່າງໜ້ອຍ ເຈັດສິບຫ້າເປີເຊັນຂອງຂອງເນື້ອທີ່ດັ່ງກ່າວ;

3) ໃນກໍລະນີ ຫຍໍ້ ຫຼື ຂະຫຍາຍ ຂະໜາດຂອງ ຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ຕາມສັດສ່ວນແລ້ວ ແຕ່ບໍ່ກວມຮອດ ເຈັດສິບຫ້າເປີເຊັນ ຂອງເນື້ອທີ່ກໍານົດ ໃຫ້ເພີ່ມເນື້ອທີ່ເປັນສີດໍາ ໃສ່ສ່ວນເຫຼືອດ້ານເທິງສຸດ ຫຼື ສອງຂ້າງ ຂອງຄໍາເຕືອນເພື່ອໃຫ້ ຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ລວມທັງ ເນື້ອທີ່ສີດໍາ ກວມຢ່າງໜ້ອຍດ້ານລະ ເຈັດສິບຫ້າເປີເຊັນ ຂອງເນື້ອທີ່ຫຼາຍທີ່ສຸດຊອງຢາສູບ;

4) ໃນກໍລະນີທີ່ ວັດຖຸຫຸ້ມຫໍ່ຢາສູບ ບໍ່ເປັນຮູບສີ່ຫຼ່ຽມ ຕ້ອງພິມຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ຕາມຂະໜາດທີ່ກໍານົດໄວ້ໃນຂໍ້ 1) ນ້ອຍ ຂອງຂໍ້ 3. ມາດຕາ 5 ຢ່າງໜ້ອຍ ສອງຮູບທີ່ແຕກຕ່າງກັນ ຕໍ່ໜຶ່ງວັດຖຸຫຸ້ມຫໍ່ ແລະ ເພີ່ມພື້ນທີ່ເປັນສີດໍາໃສ່ສ່ວນເຫຼືອ ດ້ານເທິງສຸດ ຫຼື ສອງຂ້າງ ຂອງຄໍາເຕືອນ ເພື່ອໃຫ້ຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ລວມທັງ ພື້ນທີ່ສີດໍາ ກວມຢ່າງໜ້ອຍດ້ານລະ ເຈັດສິບຫ້າເປີເຊັນຂອງວັດຖຸຫຸ້ມຫໍ່ຢາສູບ.

4. ວັດຖຸຫຸ້ມຫໍ່ ຫຼື ຕຸດຢາສູບ

1) ໃນກໍລະນີ ຕຸດຢາສູບດ້ານທີ່ມີເນື້ອທີ່ລະຫວ່າງ 229 ຫາ 242,5 ຊັງຕີຕາແມັດ ເປັນດ້ານທີ່ມີເນື້ອທີ່ຫຼາຍທີ່ສຸດ, ໃຫ້ພິມຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ທີ່ມີຂະໜາດ 27,3 x 6,52 ຊັງຕີແມັດ ໃສ່ຂອບເທິງສຸດ ໂດຍໃຫ້ກວມເອົາ ຢ່າງໜ້ອຍດ້ານລະ ເຈັດສິບຫ້າ ເປີເຊັນ ຂອງເນື້ອທີ່ດັ່ງກ່າວ;

2) ໃນກໍລະນີ ຕຸດຢາສູບດ້ານທີ່ມີເນື້ອທີ່ຫຼາຍທີ່ສຸດນັ້ນ ມີເນື້ອທີ່ນ້ອຍກວ່າ ຫຼື ຫຼາຍກວ່າ 229 ຫາ 242,5 ຊັງຕີຕາແມັດ, ຮູບພາບ ແລະ ຂໍ້ຄວາມຄໍາເຕືອນທີ່ພິມນັ້ນ ສາມາດ ຫຍໍ້ ຫຼື ຂະຫຍາຍຂະໜາດໄດ້ຕາມ ຄວາມເໝາະສົມ ແຕ່ຕ້ອງຮັກສາສັດສ່ວນຂອງ ຄວາມກວ້າງ ແລະ ຄວາມສູງ ລວມທັງ ຄວາມຊັດເຈນ ຂອງຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ໄວ້ຄືເກົ່າ ແລະ ໃຫ້ເນື້ອທີ່ຂອງຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ກວມເອົາຢ່າງໜ້ອຍດ້ານລະ ເຈັດສິບຫ້າເປີເຊັນຂອງເນື້ອທີ່ດັ່ງກ່າວ;

3) ໃນກໍລະນີ ຫຍໍ້ ຫຼື ຂະຫຍາຍ ຂະໜາດຂອງ ຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ຕາມສັດສ່ວນແລ້ວ ແຕ່ບໍ່ກວມຮອດ ເຈັດສິບຫ້າເປີເຊັນ ຂອງເນື້ອທີ່ກໍານົດ ໃຫ້ເພີ່ມເນື້ອທີ່ເປັນສີດໍາ ໃສ່ສ່ວນເຫຼືອ ດ້ານເທິງສຸດ ຫຼື ສອງຂ້າງ ຂອງຄໍາເຕືອນເພື່ອໃຫ້ ຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ລວມທັງ ເນື້ອທີ່ສີດໍາ ກວມຢ່າງໜ້ອຍດ້ານລະ ເຈັດສິບຫ້າເປີເຊັນ ຂອງເນື້ອທີ່ຫຼາຍທີ່ສຸດຂອງຕຸດຢາສູບ;

4) ຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ໃນ ຂໍ້ 4 ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ແມ່ນບໍ່ໄດ້ບັງຄັບໃຊ້ກັບຕຸດຢາສູບທີ່ເປັນ ປາສະຕິກໃສ, ບໍ່ມີສີ ຊຶ່ງສາມາດເບິ່ງເຫັນຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ຂອງຊອງຢາສູບທີ່ບັນຈຸຢູ່ໃນ ຕຸດນັ້ນໄດ້ຢ່າງຊັດເຈນແລ້ວ.

5. ຕູ້ວາງຂາຍຢາສູບ ຈະຕ້ອງເປັນປະເພດໃສ ສາມາດສ່ອງເຫັນ ຊອງຢາສູບທີ່ແທ້ຈິງຢູ່ໃນຕູ້ໄດ້ຢ່າງຊັດເຈນ, ຊຶ່ງຊອງຢາສູບດັ່ງກ່າວມີ ຮູບພາບ, ຂໍ້ຄວາມຄຳເຕືອນ ແລະ ສະຫຼາກ ຕາມການກຳນົດຂອງ ກະຊວງສາທາລະນະສຸກ;
6. ໃນການຈັດພິມຄຳເຕືອນສຸຂະພາບຕ້ອງມີການສັບປ່ຽນໝູນວຽນ ທັງທີ່ກຮູບ ພ້ອມດ້ວຍຂໍ້ຄວາມຕ່າງໆໃນທຸກໆຫ້າສິບພັນຊອງ;
7. ໃນກໍລະນີທີ່ ຜະລິດ ຫຼື ນຳເຂົ້າ ຜະລິດຕະພັນຢາສູບແຕ່ລະຍີ່ຫໍ້ທີ່ມີຫຼາຍຮູບແບບນັ້ນ, ແຕ່ລະຮູບແບບແມ່ນໃຫ້ພິມຮູບພາບ ແລະ ຂໍ້ຄວາມຄຳເຕືອນ ທີ່ແຕກຕ່າງກັນ;
8. ຕ້ອງພິມ ຮູບພາບ ແລະ ຂໍ້ຄວາມຄຳເຕືອນ ຕາມຕົ້ນສະບັບ ທີ່ອະນຸມັດຈາກ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກເທົ່ານັ້ນ. ຄ່າຄວາມເຂັ້ມຂອງສີ, ນ້ຳໜັກສີ, ຂະໜາດ ແລະ ຕຳແໜ່ງຂອງໂຕອັກສອນ, ຮູບພາບ ແລະ ຂໍ້ຄວາມຄຳເຕືອນ ລວມທັງຄວາມຊັດເຈນ ຂອງຮູບຕ້ອງພິມຕາມຕົ້ນສະບັບຄຳເຕືອນສຸຂະພາບ ໃນເອກະສານຊ້ອນທ້າຍ 1;
9. ສຳລັບ ວັນ ເດືອນ ປີ ຜະລິດ ຂອງຜະລິດຕະພັນຢາສູບ ແມ່ນໃຫ້ພິມໃສ່ດ້ານໃດໜຶ່ງຂອງວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ ທີ່ສາມາດເຫັນໄດ້ຢ່າງຊັດເຈນຢູ່ນອກເນື້ອທີ່ ທີ່ໄດ້ກຳນົດໃຫ້ພິມຮູບພາບ, ຂໍ້ຄວາມຄຳເຕືອນ ແລະ ສະຫຼາກ.

**ມາດຕາ 6 ການພິມສະຫຼາກ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ**

ຜະລິດຕະພັນຢາສູບທີ່ຜະລິດຢູ່ພາຍໃນປະເທດ, ນຳເຂົ້າມາຈາກຕ່າງປະເທດເພື່ອຈຳໜ່າຍໃນ ສປປ ລາວ ລວມທັງ ໃນຮ້ານຄ້າປອດພາສີ ຕ້ອງໄດ້ພິມສະຫຼາກໃຫ້ຖືກຕ້ອງຕາມຫຼັກການ ດັ່ງນີ້:

1. ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ກະຊວງສາທາລະນະສຸກ ເປັນຜູ້ກຳນົດສະຫຼາກກ່ຽວກັບ ສານພິດ ແລະ ສານກໍ່ມະເຮັງ ໃນຄວັນຢາສູບ ເພື່ອສະໜອງໃຫ້ແກ່ຜູ້ດຳເນີນທຸລະກິດ ຜະລິດ ແລະ ນຳເຂົ້າ ຜະລິດຕະພັນຢາສູບ ໃນການຈັດພິມຕາມຕົ້ນສະບັບ ຊຶ່ງມີ 09 ແບບ ໂດຍໃຫ້ພິມແຕ່ລະແບບສັບປ່ຽນກັນ. ສະຫຼາກຕ້ອງກວມເອົາ ຢ່າງໜ້ອຍ ເຈັດສິບຫ້າເປີເຊັນ ທັງສອງດ້ານຂ້າງ ຫຼື ດ້ານເທິງ ແລະ ດ້ານລຸ່ມ ຂອງວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບທີ່ສາມາດເຫັນໄດ້ຢ່າງຊັດເຈນ. ຕ້ອງມີການກຳນົດສະຫຼາກໃໝ່ ໃນທຸກສອງປີ ຫຼື ແຕ່ລະໄລຍະ ໂດຍອີງຕາມຜົນການຄົ້ນຄວ້າທາງດ້ານ ວິຊາການ ທັງພາຍໃນ ແລະ ສາກົນ;
2. ສະຫຼາກປະກອບມີ 09 ແບບ ດັ່ງນີ້:

| | |
|---|---|
| ແບບທີ 1 | ຄວັນຢາສູບມີສານ ຄາບອນ ມໍນອກໄຊ ເປັນສານພິດແບບດຽວກັນກັບຄວັນທໍ່ລົດ; |
| ແບບທີ 2 | ຄວັນຢາສູບມີສານ ໄຮໂດຣເຈນ ໄຊຢາໄນ ແມ່ນແກັສພິດທີ່ທຳລາຍຫຼອດປອດ ແລະ ຖົງປອດ; |
| ແບບທີ 3 | ນິໂກຕີນໃນຢາສູບ ເຮັດໃຫ້ເສບຕິດ ແລະ ໃຊ້ຜະລິດເປັນຢາຂ້າແມງໄມ້; |
| ແບບທີ 4 | ຄວັນຢາສູບມີສານ ແອມໂມເນຍ ໃຊ້ເປັນນ້ຳຢາລ້າງຫ້ອງນ້ຳ; |
| ແບບທີ 5 | ຄວັນຢາສູບມີ ແກັສພິດ ໄນໂຕຣເຈນ ໄດອອກໄຊ; |
| ແບບທີ 6 | ຄວັນຢາສູບມີສານ ອາກເຊນິກ ທີ່ໃຊ້ເປັນຢາເບື່ອໜູ; |
| ແບບທີ 7 | ຄວັນຢາສູບມີສານ ທາຣ ທີ່ພາໃຫ້ເປັນມະເຮັງປອດ; |
| ແບບທີ 8 | ຄວັນຢາສູບມີສານ ຟອກໂມນ ເປັນນ້ຳຢາດອງສົບ; |
| ແບບທີ 9 | ຄວັນຢາສູບມີສານ ໄນໂຕຣຊາມີນ ທີ່ພາໃຫ້ເປັນມະເຮັງ. |

- ລາຍລະອຽດໃຫ້ເບິ່ງເອກະສານຊ້ອນທ້າຍ ທີ 2.

3. **ວັດຖຸຫຸ້ມຫໍ່ ຫຼື ຊອງຢາສູບ**

1) ໃນກໍລະນີ ຊອງຢາສູບດ້ານຂ້າງທີ່ມີເນື້ອທີ່ລະຫວ່າງ 16,7 ຫາ 21,36 ຊັງຕີຕາແມັດ ຕ້ອງພິມສະຫຼາກກ່ງວກັບ ສານພິດ ແລະ ສານທີ່ພາໃຫ້ເປັນມະເຮັງ ໃນຄວັນຢາສູບ ທີ່ມີຂະໜາດ 2,2 x 6,6 ຊັງຕີແມັດ ໂດຍໃຫ້ພິມໃສ່ຂອບລຸ່ມສຸດຂອງດ້ານຂ້າງຊອງຢາສູບ ແລະ ໃຫ້ພິມສະຫຼາກໃສ່ແຕ່ລະຂ້າງໃນແບບທີ່ແຕກຕ່າງກັນ. ເນື້ອທີ່ຂອງສະຫຼາກຕ້ອງກວມເອົາຢ່າງໜ້ອຍດ້ານລະ ເຈັດສິບຫ້າເປີເຊັນຂອງຂ້າງຊອງຢາສູບທີ່ສາມາດເຫັນໄດ້ ຢ່າງຊັດເຈນ;

2) ຖ້າຫາກ ດ້ານຂ້າງຂອງຊອງຢາສູບ ມີເນື້ອທີ່ ນ້ອຍກວ່າ ຫຼື ຫຼາຍກວ່າ 16,7 ຫາ 21,36 ຊັງຕີຕາແມັດ, ສະຫຼາກກ່ງວກັບ ສານພິດ ແລະ ສານພາໃຫ້ເປັນມະເຮັງ ໃນຄວັນຢາສູບ ທີ່ພິມນັ້ນ ສາມາດຫຍໍ້ ຫຼື ຂະຫຍາຍ ຂະໜາດໄດ້ຕາມຄວາມເໝາະສົມ ແຕ່ຕ້ອງຮັກສາສັດສ່ວນຂອງ ຄວາມກວ້າງ ແລະຄວາມສູງ ຂອງສະຫຼາກໃຫ້ຄືເກົ່າ. ເນື້ອທີ່ຂອງສະຫຼາກ ຕ້ອງກວມເອົາຢ່າງໜ້ອຍດ້ານລະ ເຈັດສິບຫ້າເປີເຊັນ ຂອງຂ້າງຊອງຢາສູບ ທີ່ສາມາດເຫັນໄດ້ຢ່າງຊັດເຈນ;

3) ໃນກໍລະນີ ຫຍໍ້ ຫຼື ຂະຫຍາຍ ຂະໜາດຂອງສະຫຼາກກ່ງວກັບ ສານພິດ ແລະ ສານກໍ່ມະເຮັງໃນຄວັນຢາສູບຕາມສັດສ່ວນແລ້ວ ແຕ່ບໍ່ກວມຮອດ ເຈັດສິບຫ້າເປີເຊັນ ຂອງແຕ່ລະຂ້າງຊອງຢາສູບ, ໃຫ້ເພີ່ມເນື້ອທີ່ເປັນສີດໍາ ໃສ່ສ່ວນເຫຼືອ ດ້ານລຸ່ມສຸດ ຫຼື ສອງຂ້າງຂອງສະຫຼາກ. ເນື້ອທີ່ຂອງ ສະຫຼາກ ແລະ ເນື້ອທີ່ສີດໍາ ຕ້ອງກວມຢ່າງໜ້ອຍດ້ານລະ ເຈັດສິບຫ້າເປີເຊັນ ຂອງຂ້າງຊອງຢາສູບ ທີ່ສາມາດເຫັນໄດ້ຢ່າງຊັດເຈນ;

4) ໃນກໍລະນີທີ່ ວັດຖຸຫຸ້ມຫໍ່ ຫຼື ຊອງຢາສູບ ບໍ່ເປັນຮູບສີ່ຫຼ່ຽມ ຕ້ອງພິມສະຫຼາກກ່ງວກັບ ສານພິດ ແລະສານພາໃຫ້ ເປັນມະເຮັງ ໃນຄວັນຢາສູບ ໃສ່ເນື້ອທີ່ສ່ວນເຫຼືອ ກົງກັນຂ້າມກັບ ຮູບພາບ ແລະ ຂໍ້ຄວາມຄໍາເຕືອນ ໂດຍໃຫ້ຄວາມສູງຂອງສະຫຼາກ ເທົ່າກັບ ຮູບພາບ ແລະ ຂໍ້ຄວາມຄໍາເຕືອນ.

4. ວັດຖຸຫຸ້ມຫໍ່ ຫຼື ຕຸດຢາສູບ

1) ໃນກໍລະນີ ດ້ານຂ້າງຕຸດຢາສູບທີ່ມີເນື້ອທີ່ລະຫວ່າງ 116,05 ຫາ 127,85 ຊັງຕີຕາແມັດ ຕ້ອງພິມສະຫຼາກກ່ງວກັບ ສານພິດ ແລະ ສານພາໃຫ້ເປັນມະເຮັງ ໃນຄວັນຢາສູບ ທີ່ມີຂະໜາດ 4,5 x 20,47 ຊັງຕີແມັດ ຢູ່ເບື້ອງຂອບຊ້າຍສຸດ ແລະ ແຕ່ລະຂ້າງແມ່ນໃຫ້ພິມສະຫຼາກ ໃນແບບທີ່ແຕກຕ່າງກັນ. ເນື້ອທີ່ຂອງສະຫຼາກຕ້ອງກວມເອົາຢ່າງໜ້ອຍ ເຈັດສິບຫ້າເປີເຊັນ ຂອງແຕ່ລະດ້ານທີ່ສາມາດເຫັນໄດ້ຢ່າງຊັດເຈນ;

2) ໃນກໍລະນີ ດ້ານຂ້າງຕຸດຢາສູບທີ່ມີເນື້ອທີ່ນ້ອຍກວ່າ ຫຼື ຫຼາຍກວ່າ 116,05 ຫາ 127,85 ຊັງຕີຕາແມັດ ສະຫຼາກທີ່ພິມນັ້ນສາມາດ ຫຍໍ້ ຫຼື ຂະຫຍາຍ ຂະໜາດໄດ້ຕາມຄວາມເໝາະສົມ ແຕ່ຕ້ອງຮັກສາສັດສ່ວນຂອງຄວາມກວ້າງ ແລະ ຄວາມສູງ ຂອງສະຫຼາກໄວ້ຄືເກົ່າ. ເນື້ອທີ່ຂອງສະຫຼາກ ຕ້ອງກວມເອົາຢ່າງໜ້ອຍ ເຈັດສິບຫ້າເປີເຊັນຂອງແຕ່ລະດ້ານທີ່ສາມາດ ເຫັນໄດ້ຢ່າງຊັດເຈນ;

3) ໃນກໍລະນີ ຫຍໍ້ ຫຼື ຂະຫຍາຍ ຂະໜາດຂອງສະຫຼາກຕາມສັດສ່ວນແລ້ວ ແຕ່ບໍ່ກວມຮອດ ເຈັດສິບຫ້າເປີເຊັນ ຂອງດ້ານຂ້າງຕຸດຢາສູບ, ໃຫ້ເພີ່ມເນື້ອທີ່ເປັນສີດໍາ ໃສ່ສ່ວນເຫຼືອ ດ້ານເທິງສຸດ ຫຼື ສອງຂ້າງຂອງສະຫຼາກ. ເນື້ອທີ່ຂອງສະຫຼາກ ແລະ ເນື້ອທີ່ສີດໍາ ຕ້ອງກວມເອົາຢ່າງໜ້ອຍ ເຈັດສິບຫ້າເປີເຊັນຂອງແຕ່ລະດ້ານທີ່ສາມາດ ເຫັນໄດ້ຢ່າງຊັດເຈນ;

4) ສະຫຼາກ ໃນ ຂໍ້ 3 ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແມ່ນບໍ່ໄດ້ບັງຄັບໃຊ້ກັບຕຸດຢາສູບທີ່ເປັນປາສະຕິກໃສ, ບໍ່ມີສີ ຊຶ່ງສາມາດເບິ່ງເຫັນສະຫຼາກຂອງຊອງຢາສູບທີ່ບັນຈຸຢູ່ໃນຕຸດນັ້ນ ໄດ້ຢ່າງຊັດເຈນແລ້ວ.

5. ໃຫ້ຜູ້ຜະລິດ ແລະ ນຳເຂົ້າ ຜະລິດຕະພັນຢາສູບ ຈັດພິມສະຫຼາກກ່ຽວກັບ ສານພິດ ແລະ ສານພາໃຫ້ເປັນມະເຮັງໃນຄວັນຢາສູບ ແລະ ມີການສັບປ່ຽນໝູນວຽນ ໃນທຸກໆ ຫ້າສິບພັນ ຊອງ ແລະ ຫ້າພັນ ຕຸດ;
6. ໃນກໍລະນີທີ່ ຜະລິດ ຫຼື ນຳເຂົ້າ ຜະລິດຕະພັນຢາສູບຫຼາຍກວ່າໜຶ່ງຍີ່ຫໍ້, ແຕ່ລະຍີ່ຫໍ້ ທີ່ມີຫຼາຍຮູບແບບນັ້ນ, ແຕ່ລະຮູບແບບແມ່ນໃຫ້ພິມສະຫຼາກກ່ຽວກັບ ສານພິດ ແລະ ສານພາໃຫ້ເປັນມະເຮັງໃນຄວັນຢາສູບທີ່ແຕກຕ່າງກັນ;
7. ຜູ້ຜະລິດ ແລະ ນຳເຂົ້າ ຜະລິດຕະພັນຢາສູບຕ້ອງພິມສະຫຼາກກ່ຽວກັບ ສານພິດ ແລະ ສານພາໃຫ້ເປັນມະເຮັງໃນຄວັນຢາສູບ ຕາມຕົ້ນສະບັບ ທີ່ສາມາດຮັບໄດ້ຈາກ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ກະຊວງສາທາລະນະສຸກເທົ່ານັ້ນ ທັງນີ້ ຄ່າຄວາມ ເຂັ້ມຂອງສີ ນ້ຳໜັກສີ ຂະໜາດ ແລະ ຕຳແໜ່ງຂອງໂຕໜັງສືທີ່ພິມໃນສະຫຼາກກ່ຽວກັບ ສານພິດ ແລະ ສານພາໃຫ້ເປັນມະເຮັງໃນຄວັນຢາສູບ ຕ້ອງເປັນໄປ ຕາມທີ່ໄດ້ກຳນົດໄວ້ໃນຕົ້ນສະບັບສະຫຼາກ ໃນເອກະສານຊ້ອນທ້າຍ 2.

**ມາດຕາ 7 ການລາຍງານ ຂໍ້ມູນ ກ່ຽວກັບ ຜະລິດຕະພັນຢາສູບ**

ຜູ້ຜະລິດ ແລະ ນຳເຂົ້າ ຜະລິດຕະພັນຢາສູບ ເພື່ອຈຳໜ່າຍຢູ່ໃນ ສປປ ລາວ ຕ້ອງ ລາຍງານຂໍ້ມູນກ່ຽວກັບ ສ່ວນປະກອບ ແລະ ຊີ້ແຈງສ່ວນປະສົມ ຢ່າງລະອຽດ ທີ່ນຳໃຊ້ເຂົ້າໃນການຜະລິດ ຜະລິດຕະພັນຢາສູບໃຫ້ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງ ສາທາລະນະສຸກ ຢ່າງໜ້ອຍປີລະ 1 ຄັ້ງ.

**ໝວດທີ IV**

**ຂໍ້ຫ້າມເພີ່ມເຕີມ ສຳລັບ ຜູ້ດຳເນີນທຸລະກິດ ຜະລິດຕະພັນຢາສູບ**

**ມາດຕາ 8 ຂໍ້ຫ້າມເພີ່ມເຕີມສຳລັບ ຜູ້ດຳເນີນທຸລະກິດຜະລິດຕະພັນຢາສູບ**

ຫ້າມຜູ້ດຳເນີນທຸລະກິດຜະລິດຕະພັນຢາສູບ ມີພຶດຕິກຳ ດັ່ງນີ້:

1. ໂຄສະນາ ແລະ ສົ່ງເສີມ ການບໍລິໂພກຜະລິດຕະພັນຢາສູບ ທຸກຮູບແບບ, ການໂຄສະນາໃສ່ຕູ້ຂາຍຢາສູບ, ການໂຄສະນາຜະລິດຕະພັນຢາສູບຂ້າມຊາດ ແລະ ກິດຈະກຳສະແດງເຖິງຄວາມຮັບຜິດຊອບ ຕໍ່ສັງຄົມ (Corporate Social Responsibility-CSR);
2. ພິມເນື້ອໃນ, ຮູບພາບຄຳເຕືອນສຸຂະພາບ ແລະ ສະຫຼາກ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ ທີ່ບໍ່ໄດ້ຮັບອະນຸຍາດຈາກ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງ ສາທາລະນະສຸກ;
3. ພິມຂໍ້ຄວາມທີ່ເຮັດໃຫ້ຜູ້ຊົມໃຊ້ຢາສູບເຂົ້າໃຈຜິດ ກ່ຽວກັບ ຄຸນລັກສະນະ ແລະ ຜົນກະທົບ ຂອງຢາສູບຕໍ່ສຸຂະພາບ ເຊັ່ນ: ອ່ອນ (Mild), ກາງ (Medium), ຈືດ (Light), ຈືດທີ່ສຸດ (Ultra-light), ອ່ອນທີ່ສຸດ (Ultra-mild), ສານທາຣຕ່ຳ (Low tar) ຫລື ຂໍ້ຄວາມ ຫລື ສັນຍາລັກ ທີ່ມີຄວາມໝາຍຄ້າຍຄືກັນ ຫຼື ພິມຄຳວ່າ ມີລົດຊາດ ແລະ ກິ່ນຕ່າງໆ ເຊັ່ນ: ເມັນທອນ (Menthol), ໝາກໄມ້, ຊາຂຽວ ແລະ ອື່ນໆ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ.

**ໝວດທີ V**

**ການຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ຂໍ້ຕົກລົງ ວ່າດ້ວຍການຄວບຄຸມຢາສູບ**

**ມາດຕາ 9. ຜູ້ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ**

ຜູ້ກວດກາ ແລະ ຈັດຕັ້ງປະຕິບັດມາດຕະການຕໍ່ຜູ້ລະເມີດ ປະກອບດ້ວຍ:

1. ກົມອະນາໄມ ແລະ ສົ່ງເສີມສຸຂະພາບ (ໜ່ວຍງານ ຄວບຄຸມຢາສູບ ແລະ ອະນາໄມສິ່ງແວດລ້ອມ) ແລະ ກອງກວດກາອາຫານ ແລະ ຢາ ໃນທຸກໆລະດັບ ຕັ້ງແຕ່ຂັ້ນສູນກາງຮອດທ້ອງຖິ່ນ;

2. ກົມຕໍາຫຼວດສິ່ງແວດລ້ອມ ທີ່ຂຶ້ນກັບກົມໃຫຍ່ຕໍາຫຼວດ ໃນທຸກໆລະດັບ ຕັ້ງແຕ່ຂັ້ນສູນກາງຮອດທ້ອງຖິ່ນ;
3. ຂະແໜງການ ຖະແຫຼງຂ່າວ-ວັດທະນະທໍາ-ທ່ອງທ່ຽວ ໃນທຸກໆລະດັບ ຕັ້ງແຕ່ຂັ້ນສູນກາງຮອດທ້ອງຖິ່ນ;
4. ຂະແໜງການ ການເງິນ ໃນທຸກໆລະດັບ ຕັ້ງແຕ່ຂັ້ນສູນກາງຮອດທ້ອງຖິ່ນ;
5. ຂະແໜງການ ອຸດສາຫະກໍາ-ການຄ້າ ໃນທຸກໆລະດັບ ຕັ້ງແຕ່ຂັ້ນສູນກາງຮອດທ້ອງຖິ່ນ;
6. ຂະແໜງການອື່ນທີ່ກ່ຽວຂ້ອງ, ບຸກຄົນ ແລະ ນິຕິບຸກຄົນ.

ສໍາລັບ ມະຕິແຕ່ງຕັ້ງ ລາຍຊື່ພ່ອຍງານ/ບຸກຄົນ ຕາມການຈັດຕັ້ງຂ້າງເທິງນີ້ ຕ້ອງເປັນໄປຕາມທີ່ໄດ້ກໍານົດ ໄວ້ໃນເອກະສານຊ້ອນທ້າຍ 3.

**ມາດຕາ 10. ສິດ ແລະ ໜ້າທີ່ຂອງ ຜູ້ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ**

1. **ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ**
   - ກວດກາຕົວຈິງຢ່າງເປັນປົກກະຕິ ກ່ຽວກັບ ເຂດຫ້າມສູບຢາ, ການພິມຄໍາເຕືອນສຸຂະພາບໃສ່ຊອງຢາສູບ ແລະ ການຫ້າມໂຄສະນາຜະລິດຕະພັນຢາສູບ ໂດຍເຊື່ອມສານເຂົ້າກັບ ວຽກງານກວດກາປະຈໍາວັນຂອງຕົນ;
   - ໃນກໍລະນີພົບເຫັນການລະເມີດ
     - ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ຕໍາຫຼວດສິ່ງແວດລ້ອມ ທີ່ຂຶ້ນກັບກົມໃຫຍ່ຕໍາຫຼວດ ໃນທຸກໆລະດັບ ຕັ້ງແຕ່ ຂັ້ນສູນກາງຮອດທ້ອງຖິ່ນ;
     - ແຈ້ງເຖິງ ຜູ່ດໍາເນີນທຸລະກິດ ຜະລິດ ແລະ ນໍາເຂົ້າ ຜະລິດຕະພັນຢາສູບ ທີ່ລະເມີດຕໍ່ການພິມຄໍາເຕືອນສຸຂະພາບໃສ່ ຊອງຢາສູບ ແລະ ການຫ້າມໂຄສະນາຜະລິດຕະພັນ ຢາສູບ;
     - ສະເໜີເຖິງຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາໃນການໂຈະ ການດໍາເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ຕາມກໍລະນີໜັກ ຫຼື ເບົາ;
   - ສັງລວມ, ສະຫຼຸບ ແລະ ລາຍງານຜົນຂອງການກວດກາທັງໝົດໃຫ້ແກ່ ຄະນະກໍາມະການ ແຫ່ງຊາດເພື່ອການຄວບຄຸມຢາສູບ ເປັນແຕ່ລະໄລຍະ;
   - ປະຕິບັດມາດຕະການອື່ນໆ ຕາມການມອບໝາຍ.
2. **ກອງກວດກາ ອາຫານ ແລະ ຢາ, ກະຊວງສາທາລະນະສຸກ**
   - ກວດກາຕົວຈິງຢ່າງເປັນປົກກະຕິ ກ່ຽວກັບ ເຂດຫ້າມສູບຢາ, ການພິມຄໍາເຕືອນສຸຂະພາບໃສ່ຊອງຢາສູບ ແລະ ການຫ້າມໂຄສະນາຜະລິດຕະພັນຢາສູບ ໂດຍເຊື່ອມສານເຂົ້າກັບ ວຽກງານກວດກາປະຈໍາວັນຂອງຕົນ;
   - ໃນກໍລະນີພົບເຫັນການລະເມີດ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ຕໍາຫຼວດສິ່ງແວດລ້ອມ ທີ່ຂຶ້ນກັບກົມໃຫຍ່ຕໍາຫຼວດ ໃນທຸກໆລະດັບ ຕັ້ງແຕ່ຂັ້ນສູນກາງ ຮອດທ້ອງຖິ່ນ;
   - ສະຫຼຸບ ແລະ ລາຍງານຜົນຂອງການກວດກາ ໃຫ້ແກ່ ກອງເລຂາຄະນະກໍາມະການແຫ່ງຊາດເພື່ອການຄວບຄຸມຢາສູບ ເປັນແຕ່ລະໄລຍະ;
   - ປະຕິບັດມາດຕະການອື່ນ ຕາມການມອບໝາຍ.
3. **ກົມຕໍາຫຼວດສິ່ງແວດລ້ອມ, ກະຊວງປ້ອງກັນຄວາມສະຫງົບ**
   - ກວດກາຕົວຈິງຢ່າງເປັນປົກກະຕິ ກ່ຽວກັບ ເຂດຫ້າມສູບຢາ, ການພິມຄໍາເຕືອນສຸຂະພາບໃສ່ຊອງຢາສູບ ແລະ ການຫ້າມໂຄສະນາຜະລິດຕະພັນຢາສູບ ໂດຍເຊື່ອມສານເຂົ້າກັບວຽກງານກວດກາປະຈໍາວັນຂອງຕົນ;

- ໃນກໍລະນີພົບເຫັນການລະເມີດ ຕ້ອງເຮັດບົດບັນທຶກ ແລະ ອອກໃບສັ່ງປັບໃໝ ຕາມລະບຽບການສະເພາະ;
- ສະຫຼຸບ ແລະ ລາຍງານຜົນຂອງການກວດກາ ໃຫ້ແກ່ ກອງເລຂາຄະນະກຳມະການແຫ່ງຊາດເພື່ອການຄວບຄຸມຢາສູບ ເປັນແຕ່ລະໄລຍະ;
- ປະຕິບັດມາດຕະການອື່ນ ຕາມການມອບໝາຍ.

4. **ກົມສື່ມວນຊົນ, ກົມຄຸ້ມຄອງການໂຄສະນາ-ສື່ສິ່ງພິມ ແລະ ຫ້ອງການທ່ອງທ່ຽວ, ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**
   - ກວດກາຕົວຈິງຢ່າງເປັນປົກກະຕິ ກ່ຽວກັບ ການຫ້າມໂຄສະນາຜະລິດຕະພັນຢາສູບ ໂດຍເຊື່ອມສານເຂົ້າກັບວຽກງານ ກວດກາປະຈຳວັນຂອງຕົນ;
   - ໃນກໍລະນີພົບເຫັນການລະເມີດ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ຕຳຫຼວດສິ່ງແວດລ້ອມ ທີ່ຂຶ້ນກັບກົມໃຫຍ່ຕຳຫຼວດ ໃນທຸກໆລະດັບ ຕັ້ງແຕ່ຂັ້ນສູນກາງ ຮອດທ້ອງຖິ່ນ;
   - ສະຫຼຸບ ແລະ ລາຍງານຜົນຂອງການກວດກາ ໃຫ້ແກ່ ກອງເລຂາຄະນະກຳມະການແຫ່ງຊາດເພື່ອການຄວບຄຸມຢາສູບ ເປັນແຕ່ລະໄລຍະ;
   - ປະຕິບັດມາດຕະການອື່ນ ຕາມການມອບໝາຍ.

5. **ກົມພາສີ, ກະຊວງການເງິນ**
   - ກວດກາຕົວຈິງຢ່າງເປັນປົກກະຕິ ກ່ຽວກັບ ການພິມຄຳເຕືອນສຸຂະພາບໃສ່ຊອງຢາສູບ, ການຫ້າມໂຄສະນາຜະລິດຕະພັນຢາສູບ ແລະ ຢາສູບເຖື່ອນ ໂດຍເຊື່ອມສານເຂົ້າກັບວຽກງານ ກວດກາປະຈຳວັນຂອງຕົນ;
   - ໃນກໍລະນີພົບເຫັນການລະເມີດ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ຕຳຫຼວດສິ່ງແວດລ້ອມ ທີ່ຂຶ້ນກັບກົມໃຫຍ່ຕຳຫຼວດ ໃນທຸກໆລະດັບ ຕັ້ງແຕ່ຂັ້ນສູນກາງ ຮອດທ້ອງຖິ່ນ;
   - ຜະລິດ ແລະ ສະໜອງແບບຟອມການປັບໃໝ ໃຫ້ຕຳຫຼວດສິ່ງແວດລ້ອມ ໃນທຸກໆລະດັບຕັ້ງແຕ່ຂັ້ນສູນກາງຮອດທ້ອງຖິ່ນ;
   - ສະຫຼຸບ ແລະ ລາຍງານຜົນຂອງການກວດກາ ໃຫ້ແກ່ ກອງເລຂາຄະນະກຳມະການແຫ່ງຊາດເພື່ອການຄວບຄຸມຢາສູບ ເປັນແຕ່ລະໄລຍະ;
   - ປະຕິບັດມາດຕະການອື່ນ ຕາມການມອບໝາຍ.

6. **ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ**
   - ກວດກາຕົວຈິງຢ່າງເປັນປົກກະຕິກ່ຽວກັບ ການພິມຄຳເຕືອນສຸຂະພາບໃສ່ຊອງຢາສູບ, ການຫ້າມໂຄສະນາຜະລິດຕະພັນຢາສູບ ແລະ ຢາສູບເຖື່ອນ ໂດຍເຊື່ອມສານເຂົ້າກັບວຽກງານ ກວດກາປະຈຳວັນຂອງຕົນ;
   - ໃນກໍລະນີພົບເຫັນການລະເມີດ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ຕຳຫຼວດສິ່ງແວດລ້ອມ ທີ່ຂຶ້ນກັບກົມໃຫຍ່ຕຳຫຼວດ ໃນທຸກໆລະດັບ ຕັ້ງແຕ່ຂັ້ນສູນກາງ ຮອດທ້ອງຖິ່ນ;
   - ເຮັດໜັງສືສະເໜີເຖິງຜູ້ດຳເນີນທຸລະກິດ ຜະລິດ ແລະ ນຳເຂົ້າ ຜະລິດຕະພັນຢາສູບ ເພື່ອເຂົ້າມາຮັບຊາບກ່ຽວກັບ ການລະເມີດ ການພິມຄຳເຕືອນສຸຂະພາບໃສ່ຊອງຢາສູບ ຫຼື ການຫ້າມໂຄສະນາຜະລິດຕະພັນຢາສູບ ຫຼື ຢາສູບເຖື່ອນ ພ້ອມທັງເຮັດບົດບັນທຶກ ແລະ ອອກໃບສັ່ງປັບໃໝ;
   - ພິຈາລະນາ ໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ຕາມກໍລະນີໜັກ ຫຼື ເບົາ;

- ສະຫຼຸບ ແລະ ລາຍງານ ຜົນຂອງການກວດກາໃຫ້ແກ່ ກອງເລຂາຄະນະກໍາມະການແຫ່ງຊາດ ເພື່ອການຄວບຄຸມຢາສູບ ເປັນແຕ່ລະໄລຍະ;
- ປະຕິບັດມາດຕະການອື່ນ ຕາມການມອບໝາຍ.

**7. ຂະແໜງການອື່ນທີ່ກ່ຽວຂ້ອງ, ບຸກຄົນ ແລະ ນິຕິບຸກຄົນ**

ໃນກໍລະນີພົບເຫັນການລະເມີດ ເຂດຫ້າມສູບຢາ, ການພິມຄໍາເຕືອນສຸຂະພາບໃສ່ຊອງຢາສູບ, ການຫ້າມໂຄສະນາຜະລິດຕະພັນຢາສູບ ແລະ ຢາສູບເຖື່ອນ ມີສິດແຈ້ງໃຫ້ເຈົ້າໜ້າທີ່ ຕາມທີ່ກໍານົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ VI
## ບົດບັນຍັດສຸດທ້າຍ

### ມາດຕາ 11 ການຈັດຕັ້ງປະຕິບັດ

ມອບໃຫ້ ກອງເລຂາຄະນະກໍາມະການແຫ່ງຊາດເພື່ອການຄວບຄຸມຢາສູບ ເປັນເຈົ້າການໂດຍກົງໃນການໂຄສະນາ, ເຜີຍແຜ່ ແລະ ຈັດຕັ້ງ ປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ; ຂະແໜງການທີ່ກ່ຽວຂ້ອງ ຕ້ອງໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 12 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ສໍາລັບ ການພິມຄໍາເຕືອນສຸຂະພາບເປັນຮູບພາບ ແລະ ສະຫຼາກ ທີ່ກໍານົດໃນມາດຕາ 5 ແລະ 6 ຂອງຂໍ້ຕົກລົງ ສະບັບນີ້ ແມ່ນມີຜົນບັງຄັບໃຊ້ພາຍໃນ ໜຶ່ງຮ້ອຍຊາວ ວັນ ນັບແຕ່ມື້ລົງໃນຈົດໝາຍເຫດທາງລັດຖະການ.

**ປະທານ ຄະນະກໍາມະການແຫ່ງຊາດ ເພື່ອການຄວບຄຸມຢາສູບ**

**ລັດຖະມົນຕີ ກະຊວງ ສາທາລະນະສຸກ**

ຮສ.ດຣ. ບຸນກອງ ສີຫາວົງ